ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 116/ນຍ

ນະຄອນຫຼວງວຽງຈັນ, ວັນທີ 26/08/24

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຊ່ວຍວຽກທ່ານ ນາຍົກລັດຖະມົນຕີ ເພື່ອຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ມະຕິ 04/ກມສພ, ມະຕິ 19/ກມສພ, ມະຕິ 05/ລບ, 2 ວາລະແຫ່ງຊາດ ແລະ ວຽກຈຸດສຸມເຄັ່ງຮ້ອນ ຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX

- ອີງຕາມ ມະຕິຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ຮັບຜິດຊອບແກ້ໄຂບັນຫາເຄັ່ງຮ້ອນຂອງເສດຖະກິດ-ການເງິນ, ບັນຫາເງິນເຟີ້, ອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ ແລະ ໜີ້ສິນຕ່າງປະເທດ ສະບັບເລກທີ 19/ກມສພ, ລົງວັນທີ 30 ມິຖຸນາ 2023;
- ອີງຕາມ ມະຕິ ວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024;
- ອີງຕາມ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ;
- ອີງຕາມ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2024.

### ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 1 ແຕ່ງຕັ້ງຄະນະຊ່ວຍວຽກ ທ່ານ ນາຍົກລັດຖະມົນຕີ ເພື່ອຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ມະຕິ 04/ກມສພ, ມະຕິ 19/ກມສພ, ມະຕິ 05/ລບ, 2 ວາລະແຫ່ງຊາດ ແລະ ວຽກຈຸດສຸມເຄັ່ງຮ້ອນ ຕາມແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2024 ແລະ 5 ປີ ຄັ້ງທີ IX, ຊຶ່ງປະກອບມີບັນດາທ່ານ ດັ່ງລຸ່ມນີ້:

1.1. ຄະນະຮັບຜິດຊອບລວມ ປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ຄຳເຈນ ວົງໂພສີ, ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ເປັນຫົວໜ້າຄະນະ;
2. ທ່ານ ປອ ສະຖາບັນກິດ ອິນສີຊຽງໃໝ່, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງຫົວໜ້າຄະນະ;
3. ທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຮອງຫົວໜ້າຄະນະ;
4. ທ່ານ ກິແກ້ວ ສິງນາວົງ, ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;
5. ທ່ານ ພົດ ຄຳກິ່ງ ພຸຍຫຼ້າມະນີວົງ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
6. ທ່ານ ບຸນເຖິງ ດວງສະຫວັນ, ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
7. ທ່ານ ດຣ ສະໜອງ ທອງຊະນະ ຮອງລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຄະນະ;
8. ທ່ານ ປອ ໄຊນະຄອນ ອິນທະວົງ, ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;

สแกนด้วย CamScanner

9. ທ່ານ ພູວົງ ກິດຕະວົງ, ຮອງລັດຖະມົນຕີ ກະຊວງການເງິນ ເປັນຄະນະ;
10. ທ່ານ ສຸລິວັດ ສຸວັນນະຈຸມຄຳ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຄະນະ;
11. ທ່ານ ປອ ເຊັງຄຳ ແກ້ວໜູຈັນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນຄະນະ;
12. ທ່ານ ລິດຕາ ຂັດທິຍະ ຮອງລັດຖະມົນຕີ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
13. ທ່ານ ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;
14. ທ່ານ ນາງ ດາລານີ ພົມມະວົງສາ ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
15. ທ່ານ ພົຕ ຄຳເພັດ ສີຊານົນ ຫົວໜ້າກົມໃຫຍ່ພາລາທິການກອງທັບ, ກະຊວງປ້ອງກັນປະເທດ ເປັນຄະນະ.

ມາດຕາ2 ເຫັນດີມອບໃຫ້ອົງການປົກຄອງແຂວງ-ນະຄອນຫຼວງ ແຕ່ງຕັ້ງຄະນະສະເພາະກິດຂັ້ນຕົ້ນ ໂດຍໃຫ້ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ເປັນຫົວໜ້າ ແລະ ປະກອບດ້ວຍຫົວໜ້າພະແນກແຜນການ ແລະ ຄະນະກຳມະການກ່ຽວຂ້ອງຂອງສະພາປະຊາຊົນຂັ້ນຕົ້ນເປັນຄະນະ.

ມາດຕາ 3 ຄະນະດັ່ງກ່າວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ແລະ ຊຸກຍູ້ ວຽກງານຈຸດສຸມເລັ່ງຮ້ອນ ຕາມມະຕິ ວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ມະຕິ ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ສະບັບເລກທີ 05/ລບ, ລົງວັນທີ 21 ພຶດສະພາ 2024;
2. ຕິດຕາມ, ກວດກາ ແລະ ຊຸກຍູ້ ການພັດທະນາໂຄງການແຮ່ທາດຕ່າງໆ ຕາມແຜນຍຸດທະສາດແຮ່ທາດ ແລະ ຕາມນິຕິກຳຕ່າງໆ ທີ່ລັດຖະບານໄດ້ວາງອອກຜ່ານມາ;
3. ຕິດຕາມ ແລະ ຊຸກຍູ້ວຽກງານສະເພາະກິດ 19/ກມສພ ໂດຍສະເພາະ ການສົ່ງເສີມການລົງທຶນ ແລະ ການຜະລິດເປັນສິນຄ້າທົດແທນການນຳເຂົ້າ; ການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ; ການສະກັດກັ້ນ ແລະ ແກ້ໄຂສິນຄ້ານອກລະບົບ;
4. ຕິດຕາມ ແລະ ຊຸກຍູ້ແຜນວຽກຈຸດສຸມ ຕາມມະຕິ ກອງປະຊຸມລັດຖະບານ ເປີດກວ້າງ ຄັ້ງທີ I ປະຈຳປີ 2024 ສະບັບເລກທີ 08/ລບ, ລົງວັນທີ 24 ກໍລະກົດ 2024;
5. ຕິດຕາມ ແລະ ຊຸກຍູ້ທິດຊີ້ນຳຂອງສະຫາຍ ເລຂາທິການໃຫຍ່ ຕໍ່ກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ ຄັ້ງທີ I ປະຈຳປີ 2024;
6. ກຳນົດເອົາບັນດາວຽກຈຸດສຸມທີ່ໄດ້ກຳນົດໃນນິຕິກຳຕ່າງໆ ເພື່ອເປັນບ່ອນອີງໃຫ້ແກ່ການແບ່ງຄວາມຮັບຜິດຊອບໃຫ້ແຕ່ລະທ່ານໃນຄະນະ ຕາມບົດບາດໜ້າທີ່ອັນເປັນປົກກະຕິ ແລະ ຕາມທິດຊີ້ນຳຂອງກົມການເມືອງສູນກາງພັກ ກໍຄືລັດຖະບານໃນໄລຍະໃໝ່, ມີການຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ລາຍງານຂັ້ນເທິງຢ່າງເປັນປົກກະຕິ.

ມາດຕາ 4 ແຕ່ງຕັ້ງກອງເລຂາຊ່ວຍວຽກຄະນະດັ່ງກ່າວ ມີດັ່ງນີ້:

1. ທ່ານ ປອ ເຊັງຄຳ ແກ້ວໜູຈັນ, ຮອງລັດຖະມົນຕີ, ຮອງ ຫສນຍ ເປັນຫົວໜ້າຄະນະ;
2. ທ່ານ ຄອນສະໄໝ ສຸພັນທອງ ຮອງຫົວໜ້າກົມເລຂາ, ຫສນຍ ເປັນຮອງຫົວໜ້າຄະນະ;
3. ທ່ານ ສອນສະໄໝ ວໍລະສານ ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;
4. ທ່ານ ແກ້ວວິໄລ ປະຖຳວົງສາ ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;
5. ທ່ານ ນາງ ຕຽງທອງ ນັນທະບຸດດີ ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;
6. ທ່ານ ສຸດສະດາ ໂພທິວັນ ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;
7. ທ່ານ ນາງ ສາຍສອນ ບຸນວິໄລ ຫົວໜ້າພະແນກ, ກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;



สแกนด้วย CamScanner

8. ທ່ານ ບຸນເສີດ ສານຍາວົງ ຫົວໜ້າພະແນກ, ກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;

9. ທ່ານ ສອນທະວີ ວິວັນໄຊ ຫົວໜ້າພະແນກ ກົມເລຂາ, ຫສນຍ ເປັນຄະນະ;

10. ທ່ານ ມັງກອນໄຊ ມະຫາລາດ ຫົວໜ້າພະແນກ, ກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;

11. ທ່ານ ນາງ ມຸກດາວັນ ເລີດຖາວອນ ຫົວໜ້າພະແນກ, ກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;

12. ທ່ານ ດາວວອນ ຂານສະຫງ່າ ຮອງຫົວໜ້າພະແນກ, ກົມເລຂາ, ຫສນຍ ເປັນຄະນະ;

13. ທ່ານ ໄຊຍະສິນ ພົມມະຈັກ ຮອງຫົວໜ້າພະແນກ, ກົມເລຂາ, ຫສນຍ ເປັນຄະນະ;

14. ທ່ານ ຄູນນະຄອນ ຈັນທະວິໄລ ຮອງຫົວໜ້າພະແນກ, ກົມຄົ້ນຄວ້າ-ສັງລວມ, ຫສນຍ ເປັນຄະນະ;

15. ທ່ານ ສະຖາພອນ ສີຣິພົນ ວິຊາການ, ກົມເລຂາ, ຫສນຍ ເປັນຄະນະ;

16. ທ່ານ ພູວົງ ແສງເມືອງ ວິຊາການ, ກົມເລຂາ, ຫສນຍ ເປັນຄະນະ;

ສຳລັບກອງເລຂາຊ່ວຍວຽກຢູ່ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ແມ່ນມອບໃຫ້ແຕ່ລະພາກສ່ວນເປັນຜູ້ແຕ່ງຕັ້ງ ໂດຍເອົາຫົວໜ້າຫ້ອງວ່າການແຕ່ລະຂັ້ນ ເປັນຫົວໜ້າ ແລະ ປະກອບດ້ວຍກົມ-ພະແນກການກ່ຽວຂ້ອງເປັນຄະນະ.

**ມາດຕາ 5** ກອງເລຂາຊ່ວຍວຽກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດວຽກງານຮອບດ້ານຊ່ວຍວຽກຄະນະ ຕາມທີ່ໄດ້ກຳນົດໃນມາດຕາ 2 ຂອງຂໍ້ຕົກລົງ ສະບັບນີ້;
2. ປະສານງານກັບພາກສ່ວນກ່ຽວຂ້ອງ ຂັ້ນສູງກາງ ແລະ ທ້ອງຖິ່ນ ເພື່ອເກັບກຳຂໍ້ມູນ, ສ້າງແຜນການເຄື່ອນໄຫວ ແລະ ການລົງເຄື່ອນໄຫວວຽກງານຕົວຈິງ ຢູ່ແຕ່ລະເປົ້າໝາຍ;
3. ຮ່າງຕາຕະລາງແບ່ງຄວາມຮັບຜິດຊອບວຽກງານໃຫ້ຄະນະດັ່ງກ່າວ ບົນພື້ນຖານພາລະບົດບາດ ຂອງຂະແໜງການ ເພື່ອນຳສະເໜີຄະນະຊ່ວຍວຽກພິຈາລະນາ;
4. ກະກຽມຈັດປະຊຸມ, ບັນທຶກກອງປະຊຸມ, ຮ່າງບົດລາຍງານ ແລະ ປະຕິບັດຕາມການຊີ້ນຳຂອງຄະນະຮັບຜິດຊອບ;
5. ປະຕິບັດໜ້າວຽກອື່ນໆ ຕາມການມອບໝາຍຂອງຄະນະຊ່ວຍວຽກ.

**ມາດຕາ 6** ມອບໃຫ້ຫົວໜ້າຄະນະຊ່ວຍວຽກດັ່ງກ່າວ ຮ່ວມກັບໝູ່ຄະນະ ປຶກສາຫາລື ເພື່ອກຳນົດແຜນເຄື່ອນໄຫວວຽກງານຂອງຕົນ, ຫຼັກການ ແລະ ແບບແຜນວິທີເຮັດວຽກ, ແບ່ງວຽກ-ແບ່ງຄວາມຮັບຜິດຊອບພາຍໃນຄະນະ ຕາມບົດບາດໜ້າທີ່ອັນເປັນປົກກະຕິ ແລະ ຕາມທິດຊີ້ນຳຂອງລັດຖະບານໃນໄລຍະໃໝ່ ໃຫ້ລະອຽດຈະແຈ້ງ.

**ມາດຕາ 7** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 8** ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບເລກທີ 05/ນຍ, 06/ນຍ, 07/ນຍ, ລົງວັນທີ 9 ມັງກອນ 2024 ແລະ ຂໍ້ຕົກລົງສະບັບອື່ນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ແມ່ນຖືກລົບລ້າງ. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ບ່ອນນຳສົ່ງ:

- ຄະນະສະເພາະກິດ 19/ກມສພ ທ່ານລະ 01 ສະບັບ.
- ບັນດາທ່ານ ທີ່ຖືກແຕ່ງຕັ້ງ ທ່ານລະ 01 ສະບັບ.
- ສຳເນົາ 01 ສະບັບ.

ສອນໄຊ ສີພັນດອນ

สแกนด้วย CamScanner